# ວິທີຈົດກ່າຍແບບສອບຖາມສຳຫລັບເດັກອາຍຸຕ່ຳກ່ວາ 5 ປີ

## ໂມດູນ I: ຂໍ້ມູນກ່ຽວກັບເດັກທີ່ມີອາຍຸຕ່ຳກວ່າ 5 ປີ:

ນັກເດີນສຳຫຼວດຈະຕ້ອງກຽມໃບສອບຖາມທີ່ຈະຖາມ ແລ້ວໃສ່ລະຫັດ ແຂວງ, ເມືອງ, ບ້ານ ແລະຄົວເຮືອນໃຫ້ຖືກຕ້ອງ. ແລະທ່ານຈະຕ້ອງໝາຍລະຫັດຄຳຕອບໃສ່ຄຳຖາມໃຫ້ເດັກນ້ອຍຕ່ຳກວ່າ 5 ປີ ທີ່ມີໃນຄົວເຮືອນໃສ່ໃນຄຳຖາມຂອງແຕ່ລະຄົນ. ໃຫ້ກວດເບິ່ງລາຍຊື່ເດັກໃນຖັງຕັ້ງທີ 4 ຂອງແບບສອບຖາມບັນຊີຄົນໃນຄົວເຮືອນ.ເອົາຊື່ເດັກຕ່ຳກວ່າ5ປີຂອງແຕ່ລະຄົນມາເຂົ້າລະດັບເລກທີ,ເອົາຊື່ແມ່ ຫຼືຜູ້ລ້ຽງດູເດັກ( ແຖວຕັ້ງທີ 7,ບັນຊີຄົນໃນຄົວເຮືອນ ) .

| | | | |
|---|---|---|---|
| ແຂວງ :................................................... | | ☐ | ☐ |
| ເມືອງ :................................................... | | ☐ | ☐ |
| ບ້ານ :..................................................... | ☐ | ☐ | ☐ |
| ເລກທີຄົວເຮືອນ: ...................................... | | ☐ | ☐ |
| ເລກທີແມ່ຍິງ........................................... | | ☐ | ☐ |
| ເລກທີເດັກ............................................... | | ☐ | ☐ |

ຄຳຖາມ1: ຂຽນຊື່ແລະຕັ້ງຄຳຖາມໄປແຕ່ລະໂມດູນໃຫ້ແມ່ຫຼືຜູ້ລ້ຽງດູເດັກ.ຂີດວົງມົນອອ້ມໃສ່ຕາມຄຳຖາມຂອງແມ່. ຕ້ອງໃຫ້ມີຄວາມແນ່ນອນວ່າ ການຂຽນໝາຍຄຳຕອບແມ່ນກົງກັບຄຳຕອບທຸກຢ່າງ.ທ່ານຕ້ອງຕັ້ງຄຳຖາມໃສ່ເດັກຕ່ຳກວ່າ5ປີໝົດທຸກຄົນທີ່ມີໃນຄົວເຮືອນ.

| | |
|---|---|
| 1. ຊື່ຂອງເດັກ: ________________________________________________ | |

*(ໃນເອກະສານນີ້ຄຳວ່າ "ແມ່" ມີຄວາມໝາຍວ່າ ແມ່ຄີງຂອງລູກ ຫຼືແມ່ລ້ຽງຜູ້ທີ່ 1 ຄຳຖາມ1. ຊື່ຂອງເດັກ: ແມ່ນໝາຍເຖີງ ເດັກ ທີ່ມີອາຍຸ ຕ່ຳກວ່າ 5 ປີ ).*

ຄຳຖາມ 2. ອາຍຸເດັກໃຫ້ຂຽນອາຍຸເຕັມຂອງເດັກ ທີ່ໄດ້ລະບຸໄວ້ໃນແຖວຕັ້ງທີ່ 2 ຂອງບັນຊີຊື່ສະມາຊິກໃນຄົວເຮືອນ. ອາຍຸເຕັມຂອງເດັກ ໝາຍເຖີງ ອາຍຸຂອງປີເຕັມ ຕົວຢ່າງ : ເດັກມີອາຍຸ 3 ປີ 9 ເດືອນ ອາຍຸເຕັມຂອງເດັກ ແມ່ນ "3 ປີ" ບໍ່ແມ່ນ 4 ປີ. ວິທີຈົດກ່າຍແມ່ນໃຫ້ຂຽນເລກ 0 ໃສ່ກ່ອນເລກຫົວໜ່ວຍ, ຖ້າຕ່ຳກ່ວາ ນຶ່ງປີ ແມ່ນຂຽນ 00.

| | | |
|---|---|---|
| 2. ອາຍຸຂອງເດັກ (ອີງໃສ່ຄຳຖາມຂໍ້ 2 ຂອງພາກບັນຊີຄົວເຮືອນ) | ອາຍຸປີເຕັມ............................___ ___ | |

ຄຳຖາມ 3. ຄຳຖາມ: ວັນ, ເດືອນ, ປີເກີດຂອງເດັກ : ໃຫ້ຖາມເບິ່ງວັນເກີດຂອງເດັກ ຈາກແມ່ ຫຼືຜູ້ດູແລເດັກ. ຖ້າຕົວເລກຂອງວັນ ແລະຂອງເດືອນຫາກເປັນຫົວໜ່ວຍດຽວ, ໃຫ້ຕື່ມເລກ 0 ໃສ່ຂ້າງໜ້າ:

ຕົວຢ່າງ: ໃນເດືອນມີນາ ແມ່ນຂຽນ 03. ຖ້າແມ່ຫາກຮູ້ວັນເກີດລະອຽດ, ກໍ່ເອົາມື້ເກີດໃສ່ພ້ອມ. ຖ້າບໍ່ມີກໍ່ໃສ່ 99 ສຳຫຼັບມື້ເກີດຂອງເດັກ. ມັນກໍ່ເປັນສິ່ງທີ່ສຳຄັນທີ່ຈະບັນທຶກເອົາ ເດືອນ ແລະປີເກີດຂອງເດັກ, ໂດຍສະເພາະນຳໃຊ້ເຂົ້າໃນການຄິດໄລ່ຢູ່ໂມດູນສັກຢາກັນພະຍາດ, ການແທກລວງສູງ ແລະຊັ່ງນ້ຳໜັກ ຂອງເດັກ .

| | | |
|---|---|---|
| 3. ວັນ ເດືອນ ປີເກີດຂອງເດັກ | ວັນທີ່/ເດືອນ/ປີ __ __/__ __/__ __ __ __<br>ຖ້າບໍ່ຮູ້ວັນທີ່ໃຫ້ໃສ່ 99 | |

## ໂມດູນ II : ການລົງທະບຽນການເກີດ ແລະການຮຽນຮູ້ເບື້ອງຕົ້ນ:

ຄຳຖາມ 1: - ຄຳຖາມນີ້ແມ່ນໃຊ້ເພື່ອກວດກາອາຍຸທີ່ຖືກຕ້ອງ ຂອງເດັກໄດ້ຖືກບັນທຶກໄວ້ແລ້ວບໍ່, ແຕ່ກໍ່ມີເປົາໝາຍ ຢາກໃຫ້ມີການຄາດຄະເນ ເຮັດການຂະຫຍາຍວຽກງານການບັນທຶກການເກີດໃນປະເທດຂອງເຮົາຄືກັນ.

- ຂີດວົງໃສ່ລະຫັດຕອບ, ບັນທຶກ ວ່າໄດ້ມີໃບຊາຕາການເກີດແທ້ ຫລືບໍ ?. ຖ້າມີໃບຊາຕາໃດ້ເຫັນໃຫ້ກວດເບິ່ງວ່າຂໍ້ 3 ມີມື້ເກີດຄືກັນບໍ່ ແລະກໍ່ດັດແປງຖ້າຈຳເປັນ. ຈາກນັ້ນຈຶ່ງຂີດເສັ້ນຜ່ານ 3 ຄຳຖາມໄປຫາຂໍ້ 8. ຖ້າບໍ່ມີໃບຊາຕາໃຫ້ເຫັນ, ແລະບໍ່ໝັ້ນໃຈໃນມື້ເກີດຂອງເດັກແທ້, ໃຫ້ພະຍາຍາມກວດເບິ່ງບັນດາເອກະສານອື່ນໆຂອງເດັກ ເປັນຕົ້ນ : (ບັດສຸຂະພາບ . . . . ). ຕ້ອງລະວັງກ່ຽວກັບທີ່ຈະຮັບເອົາມື້ເກີດ ທີ່ບັນທຶກໄວ້ຈາກ ບັດສັກຢາກັນພະຍາດ ຫຼືຈາກເອກະສານອື່ນໆ ທີ່ໄດ້ຖືກສ້າງຂຶ້ນພາຍຫຼັງການເກີດຂອງເດັກ. ໃຫ້ກວດເບິ່ງມື້ເກີດໂດຍຖາມແມ່ຕື່ມ ວ່າແມ່ນມື້ເກີດແທ້ບໍ່ ? ຖ້າບໍ່ມີໃບຢັ້ງຢືນໃຫ້ເບິ່ງໄປຂໍ້ຄຳຖາມ: 5. ຖ້າວ່າມີໃບຢັ້ງຢືນການເກີດ ບໍ່ໄດ້ເອົາມາໃຫ້ເບິ່ງ, ຫຼືກໍ່ບໍ່ມີເລີຍ, ແລະແມ່ກໍ່ບໍ່ໝັ້ນໃຈ (ບໍ່ຈື່) ໃນວັນເກີດຂອງເດັກ, ທ່ານຕ້ອງໄດ້ໃຊ້ຄຳຖາມເຈາະຈີ້ມຕື່ມ ເພື່ອໃຫ້ໄດ້ຮັບການຄາດຄະເນມື້ເກີດຂອງເດັກ ເທົ່າທີ່ຈະເຮັດໄດ້. ຖ້າວ່າແມ່ສາມາດຈື່ປີເກີດໄດ້, ແຕ່ບໍ່ຈື່ເດືອນ, ໃຫ້ຖາມເຈາະຈີ້ມຕື່ມ ເພື່ອຄາດຄະເນເດືອນເກີດ. ທ່ານຕ້ອງຂຽນເດືອນເປັນຕົວເລກ.

- ຖ້າທ່ານບໍ່ສາມາດຄາດຄະເນເອົາເດືອນເກີດໄດ້, ທ່ານຕ້ອງຖາມເອົາວ່າລະດູໃດເດັກໄດ້ເກີດ. ຖ້າຍັງບໍ່ສາມາດຄາດຄະເນເອົາເດືອນເກີດໄດ້, ກໍ່ຂຽນ 99 ລົງໃສ່ບ່ອນວ່າງສຳລັບເດືອນ. ຖ້າທ່ານບໍ່ຮູ້ມື້ເກີດ, ກໍ່ຂຽນ 99 ລົງໃສ່ບ່ອນວ່າງສຳລັບມື້. ບໍ່ໃຫ້ປະແຖວຕັ້ງເປັນວ່າງລ້າໆ.

- ທ່ານຕ້ອງບັນທຶກປີເກີດ. ຖ້າແມ່ບໍ່ສາມາດໃຫ້ປີເກີດໄດ້, ທ່ານຕ້ອງໃຊ້ເຫດການວັນສຳຄັນໃນຮອບປີເພື່ອຄາດຄະເນປີເກີດຂອງເດັກ. ຖ້າບໍ່ມີຊ່ອງທາງທີ່ຈະຄາດຄະເນປີເກີດຂອງເດັກໄດ້,

ໃຫ້ສົມທຽບການເກີດຂອງເດັກ ໃສ່ກັບເດັກຂອງຄົວເຮືອນອື່ນ ທີ່ຮູ້ວັນເດືອນປີແລ້ວ. ທ່ານຕ້ອງໃຊ້ການຄຳນຶງພິຈາລະນາ ເພື່ອຄາດຄະເນການເກີດຂອງເດັກແຕ່ລະຄົນ.

- ຄວນຈຳໄວ້ວ່າ ອາຍຸເກີດແມ່ນອາຍຸເຕັມຂອງເດັກ, ໝາຍເອົາປີເຕັມທີ່ເດັກໄດ້ຜ່ານ ວັນເກີດຂອງປີນີ້ມາແລ້ວ.

| | | |
|---|---|---|
| 1. (ຊື່ເດັກ)ມີ ໃບຊາຕາການເກີດຫລືບໍ່?<br><br>• *ຖ້າມີໃບຊາຕາການເກີດໃຫ້ກວດເບິ່ງອາຍຸວັນເດືອນປີເກີດຄືນ*<br>• *ຖ້າບໍ່ມີໃຫ້ພະຍາຍາມເບິ່ງຈາກບັດກວດສຸຂະພາບຫລືເອກສານອື່ນໆທີ່ມີ. ຖ້າຈຳເປັນກໍ່ແປງອາຍຸໃຫ້ຖືກຕ້ອງ* | ມີ, ເຫັນໃບຊາຕາການເກີດ.......................1<br>ມີ, ບໍ່ເຫັນໃບຊາຕາການເກີດ.....................2<br>ບໍ່ມີ.....................................................3<br><br>ບໍ່ຮູ້ຈັກ................................................8 | 1 ⇒ ຂໍ້ 8 |

<u>ຄຳຖາມ 2</u> - ໃຫ້ໃຊ້ຄຳຖາມນີ້ຖ້າວ່າແມ່ບໍ່ມີໃບຢັ້ງຢືນໃຫ້ທ່ານເບິ່ງໄດ້. ຖ້າຄຳຕອບວ່າ “ໄດ້” ຂີດວົງມົນໃສ່ 1 ແລະຜ່ານໄປຫາຂໍ້ 8, ໂດຍຂີດເສັ້ນຜ່ານໄປຫາ. ຖ້າຄຳຕອບວ່າ “ບໍ່” ຂີດວົງມົນໃສ່ 2 ແລະກໍ່ໄປຫາຄຳຖາມ 6. ຖ້າຄຳຕອບວ່າ “ບໍ່ຮູ້“ ຂີດວົງມົນໃສ່ 9 ແລະຂ້າມໄປຫາຄຳຖາມ 7, ໂດຍຂີດເສັ້ນຜ່ານຄຳຖາມໄປ.

| | | |
|---|---|---|
| 2. ຖ້າບໍ່ມີ ໃບຊາຕາການເກີດ, ໃຫ້ຖາມເວລາ (ຊື່ເດັກ) ເກີດໄດ້ໄປແຈ້ງການເກີດ ຫລືບໍ່? | ແຈ້ງ...................................................1<br>ບໍ່ໄດ້ແຈ້ງ............................................2<br><br>ບໍ່ຮູ້ຈັກ................................................8 | 1 ⇒ ຂໍ້ 8<br><br><br>8 ⇒ ຂໍ້ 7 |

ຄຳຖາມ 3: ເປັນຫຍັງການເກີດຂອງລາວຈຶ່ງ ບໍ່ໄດ້ຂຶ້ນທະບຽນ ? - ຄຳຖາມນີ້ເພື່ອຊອກຮູ້ຄຳຖາມວ່າບໍ່ໄດ້ຂຶ້ນທະບຽນແມ່ນຍ້ອນສາຍເຫດອັນໃດ ? ໃຫ້ໝາຍລະຫັດຕາມຄຳຕອບຈາກແມ່. ຖ້າຄຳຕອບຫາກມີຫຼາຍອັນ ກໍ່ໃຫ້ຂີດວົງມົນໃສ່ຄຳຕອບຈົນຄົບ.

| | | |
|---|---|---|
| 3. ເປັນຫຍັງ(ຊື່ເດັກ)ເກີດຈຶ່ງບໍ່ໄດ້ແຈ້ງ? | ມັນແພງຫລາຍ....................................1<br>ບ່ອນແຈ້ງຢູ່ໄກໂພດ...............................2<br>ບໍ່ຮູ້ວ່າຈຳເປັນຕ້ອງໄປແຈ້ງ......................3<br>ມັນຊ້າແລ້ວເລີຍບໍ່ຢາກຖືກປັບໃໝ............4 | |

| | | |
|---|---|---|
| | ບໍ່ຮູ້ບ່ອນທີ່ຈະໄປແຈ້ງ............................5<br><br>ອື່ນໆຈົ່ງບອກແຈ້ງ _________________6<br>ບໍ່ຮູ້ຈັກ..............................................8 | |

ຄຳຖາມ 4: - ເປົ້າໝາຍຂອງຄຳຖາມນີ້ແມ່ນ ເພື່ອປະເມີນວ່າ ຄວາມຮູ້ (ກ່ຽວກັບການຂຶ້ນທະບຽນການເກີດ, ຫຼືຖ້າມີບ່ອນຂຶ້ນທະບຽນ, ແຕ່ກໍ່ບໍ່ຮູ້ບ່ອນຂຶ້ນທະບຽນ) ແມ່ນມີຄວາມໝາຍສຳຄັນເທົ່າໃດ ແລະເຫດຜົນຂອງມັນມີຄືແນວໃດ ທ່ານຈຶ່ງບໍ່ໄປຂຶ້ນທະບຽນການເກີດ. ຂ່າວດັ່ງກ່າວນີ້ຈະແນະນຳໃຫ້ພາກສ່ວນ ໃຫ້ການສຶກສາເດັກເອົາໃຈໃສ່ ແລະຊ່ວຍໃຫ້ມີການໂຄສະນາຕື່ມ.

- ໃຫ້ຂີດວົງມົນອ້ອມຄຳຕອບທີ່ຖືກຕ້ອງໄວ້. ຖ້າບໍ່ຮູ້ຈັກ, ຂີດວົງມົນໃສ່ 2 “ບໍ່ຮູ້ຈັກ” .

| | | |
|---|---|---|
| 4. ທ່ານຮູ້ຈັກບໍ່ວ່າຈະໄປແຈ້ງການເກີດລູກຄືແນວໃດ? | ຮູ້ຈັກ...................................................1<br>ບໍ່ຮູ້ຈັກ.................................................2 | |

➢ ***ຄຳຖາມກວດຄືນ: ຈົ່ງກວດເບິ່ງອາຍຸຂອງເດັກໃນຄຳຖາມ 2 ໂມດູນ I***

☐ ***ຖ້າວ່າເດັກມີອາຍຸ 3 ຫລື 4 ປີ ແມ່ນໃຫ້ຖາມຄຳຖາມ 5 ຕໍ່ໄປ***

☐ ***ຖ້າວ່າບໍ່ແມ່ນໃຫ້ຂ້າມໄປຫາຄຳຖາມ 7***

ຄຳຖາມ 5: ຄຳຖາມນີ້ມີເປົ້າໝາຍຢາກຮູ້ວ່າ ເດັກ 3 ປີ ຂຶ້ນໄປໄດ້ເຂົ້າຮຽນໂຮງຮຽນອະນຸບານ ຫລືຝາກເດັກໃດໜຶ່ງບໍ່ ?. ໝາຍລະຫັດຄຳຕອບເອົາ. ຖ້າຄຳຕອບວ່າ } ບໍ່ໄດ້ເຂົ້າ ~ ຫຼື } ບໍ່ຮູ້ຈັກ ~, ໃຫ້ຂີດເສັ້ນຜ່ານຄຳຖາມຕໍ່ໄປ ແລະໃຫ້ໄປໂມດູນອື່ນ. ຖ້າເດັກແມ່ນຕ່ຳກວ່າ 3ປີ ແລະບາງຄັ້ງບໍ່ສາມາດໃຫ້ຄຳຕອບນີ້ໄດ້, ໃຫ້ຂີດເສັ້ນຜ່ານໄປ ແລະໄປໂມດູນຕໍ່ໄປ.

| | | |
|---|---|---|
| 5. ຈົ່ງກວດເບິ່ງອາຍຸຖ້າເດັກອາຍຸ 3 ປີຫລື 4 ປີໃຫ້ຖາມ:<br>(ຊື່ເດັກ)ໄດ້ເຂົ້າໂຮງຮຽນອະນຸບານຫລືເຮືອນຝາກເດັກຂອງລັດ, ເອກະຊົນ ຫລືຊຸມຊົນທີ່ຈັດຕັ້ງຂຶ້ນຫລືບໍ່? | ໄດ້ເຂົ້າຮຽນ...........................................1<br>ບໍ່ ໄດ້ເຂົ້າຮຽນ......................................2<br>ບໍ່ຮູ້ຈັກ................................................5 | <br>2⇒ໄປໂມດູນ 2<br>5⇒ໄປໂມດູນ 2 |

ຄຳຖາມ 6: ໃນ 7 ວັນ ຜ່ານມາ, ເດັກ ໄດ້ເຂົາຮຽນຈັກຊົ່ວໂມງ? - ຖ້າຄຳຕອບຂອງຄຳຖາມ 5 ແມ່ນໄດ້ເຂົ້າຮຽນ, ແລ້ວຈຶ່ງຕັ້ງຄຳຖາມນີ້ ແລະບັນທຶກເອົາການຄຳນວນເວລາ ທີ່ເດັກໄດ້ໄປເຂົາຮຽນ ໃນເວລາ 7 ວັນຜ່ານມາ. ລົງລະຫັດ 0 ກ່ອນຖ້າມີຕົວເລກເປັນຫົວໜ່ວຍດຽວ.

| | | |
|---|---|---|
| 6. ໃນໄລຍະ ເຈັດວັນນີ້, (ຊື່<br>ເດັກ)ໄດ້ເຂົ້າຮຽນຈັກຊົ່ວໂມງ? | ຈຳນວນຊົ່ວໂມງ............................___ ___ | |

ຄຳຖາມ 7: ຄຳຖາມນີ້ມີເປົາໝາຍຢາກຮູ້ວ່າ ໃນ 3 ວັນຜ່ານມາ ທ່ານ ຫລືສະມາຊິກໃນຄົວເຮືອນ ຂອງທ່ານ ທີມີອາຍຸ 15 ປີ ຂື້ນໄປໄດ້ມີກິດຈະກຳຮ່ວມກັບເດັກນ້ອຍ ຫລື ບໍ່ ? ເຊັ່ນວ່າ : ອ່ານປຶ້ມເລື່ອງ, ເລົ່ານິທານ, ຮ້ອງເພງ ແລະ ກິດຈະກຳອື່ນໆ ....

| | | |
|---|---|---|
| 7. ໃນ 3 ວັນຜ່ານມາ, ທ່ານ ຫລື ສະມາຊິກໃນຄົວເຮືອນຂອງທ່ານທີມີອາຍຸ 15 ປີ ຂື້ນໄປແມ່ນໄດ້ມີກິດຈະກຳຮ່ວມກັບເດັກ (ຊື່) ຫລື ບໍ່ ?<br>ຖ້າມີ, ຖາມ: ແມ່ນໃຜເຂົ້າຮ່ວມໃນກິດຈະກຳຮ່ວມກັບເດັກ-ແມ່, ພໍ່ຂອງເດັກ ຫລື ຜູ້ ໃຫ່ຍອື່ນໆທີແມ່ນສະມາຊິກຂອງຄົວເຮືອນ (ລວມທັງຜູ້ດູແລເດັກ/ຜູ້ໃຫ້ສຳພາດ)?<br>ຂີດອ້ອມວົງມົນເອົາຄຳຕອບທີຖືກຕ້ອງ<br>7.ກ ອ່ານປື້ມ ຫລື ປື້ມຮູບຮ່ວມກັບເດັກ (ຊື່)?<br>7.ຂ ເລົ່ານິທານໃຫ້ເດັກ(ຊື່)ຟັງຫລື ບໍ່ ?<br>7.ຄ ຮ້ອງເພງຮ່ວມກັບເດັກ(ຊື່) ຫລື ບໍ່ ?<br>7.ງ ພາເດັກ(ຊື່)ໄປຫລີ້ນຂ້າງນອກ,ບໍລິເວນບ້ານ,ສວນ ຫລື ຂ້າງກຳແພງອ້ອມຮົ້ວຫລື ບໍ່?<br>7.ຈ ຫລີ້ນກັບເດັກ(ຊື່) ຫລືບໍ່ ?<br>7.ສ ໃຊ້ເວລາຮ່ວມກັບເດັກ(ຊື່)ໃນການພາເດັກຕັ້ງຊື່,ພາເດັກຮຽນຫລື ພາຫຼິ້ນສິ່ງຂອງຕ່າງໆ ຫລື ບໍ່ ? | ແມ່ ພໍ່ ຄົນອື່ນ ບໍ່ມີໃຜ<br>ອ່ານປື້ມ................... 1 2 6 8<br>ເລົ່ານິທານ................. 1 2 6 8<br>ຮ້ອງເພງ..................... 1 2 6 8<br>ພາໄປຫຼີ້ລນຢູ່ຂ້າງນອກ..... 1 2 6 8<br>ຫລີ້ນກັບເດັກ................ 1 2 6 8<br>ໃຊ້ເວລາຮ່ວມກັບເດັກ(ຊື່).. 1 2 6 8 | |

## ໂມດູນ III : ການພັດທະນາການຂອງເດັກ

ໂມດູນນີ້ມີເປົ້າຫມາຍເພື່ອຢາກຮູ້ການຮຽນຮູ້ຂອງເດັກພ້ອມທັງສິ່ງຂອງຕ່າງໆທີ່ເດັກຫລິ້ນລວມທັງຢູ່ພາຍໃນເຮືອນ ແລະ ນອກເຮືອນ ວ່າເດັກໄດ້ເຮັດກິດຈະກຳຫຍັງແດ່ບໍ່ ?

ຄຳຖາມ 1. ແມ່ນຫມາຍຄວາມວ່າປື້ມເລື່ອງ ຫລື ປື້ມຮູບທີ່ທ່ານມີສຳລັບອ່ານໃຫ້ເດັກຟັງ ຫລື ໃຫ້ເດັກອ່ານນັ້ນມີຈັກຫົວ ?

ວິທີຈົດ:ແມ່ນຈົດນັບເອົາປື້ມທັງຫມົດລວມທັງປື້ມອ່ານ ແລະ ປື້ມຮູບ

- ຖ້າວ່ານ້ອຍກວ່າ 10 ຫົວ ແມ່ນຈົດໃສ່ ຈຳນວນປື້ມສຳລັບເດັກ
- ຖ້າວ່າຫລາຍກວ່າ 10 ຫົວ ແມ່ນຂີດວົງມົນອອ້ມເລກ 10 , ຖ້າບໍ່ມີ ແມ່ນຂຽນ ເລກ 0

| | | |
|---|---|---|
| 1. ທ່ານມີ ປື້ມເລື່ອງ ຫຼື ປື້ມຮູບ ສຳລັບເດັກ (ຊີ້) ຈັກຫົວ ?<br>*ຖ້າ ບໍ່ມີ 0* | ຈຳນວນປື້ມສຳລັບເດັກ .................. __<br>ມີ 10 ຫົວຂື້ນໄປ.............................10 | |

ຄຳຖາມ 2. ແມ່ນຫມາຍເຖິງປື້ມອື່ນໆທີ່ມີລວມທັງປື້ມແບບຮຽນແຕ່ບໍ່ແມ່ນປື້ມເລື່ອງ ຫລື ປື້ມຮູບ.

ວິທີຈົດ:ແມ່ນຈົດນັບເອົາປື້ມທັງຫມົດນອກຈາກປື້ມທີ່ໄດ້ຈົດເອົາຢູ່ຄຳຖາມ1 ແລ້ວ.

- ຖ້າວ່ານ້ອຍກວ່າ 10 ຫົວ ແມ່ນຈົດໃສ່ ຈຳນວນປື້ມອື່ນໆໃສ.
- ຖ້າວ່າຫລາຍກວ່າ 10 ຫົວ ແມ່ນຂີດວົງມົນອອ້ມເລກ 10 , ຖ້າບໍ່ມີ ແມ່ນຂຽນ ເລກ 0

| | | |
|---|---|---|
| 2. ມີປື້ມອື່ນໆ ຫຼາຍປານໃດຢູ່ໃນຄົວເຮືອນຂອງທ່ານ ? ( ລວມທັງປື້ມແບບຮຽນ, ແຕ່ບໍ່ແມ່ນປື້ມສຳລັບເດັກ ເຊັ່ນ: ປື້ມຮູບຫຼືປື້ມເລື່ອງ)<br>*ຖ້າ ບໍ່ມີ 0* | ຈຳນວນປື້ມອື່ນໆ.......................... __<br><br>ຈຳນວນປື້ມອື່ນໆທີ່ມີ 10 ຫົວຂື້ນໄປ......10 | |

ຄຳຖາມ 3. ແມ່ນຕ້ອງການຢາກຮູ້ວ່າເດັກໄດ້ຫຼິ້ນຫັຍງແດ່ໃນເວລາທີ່ລາວຢູ່ໃນເຮືອນ ແລະ ຂອບເຂດຂອງເຮືອນ , ເຊິ່ງໃນຄຳຕອບໄດ້ແບ່ງອອກເປັນພາກດັ່ງນີ້: **ວັດຖຸອຸປະກອນຢູ່ໃນເຮືອນຄົວ** ເຊັ່ນວ່າ: ເດັກໄດ້ຫລິ້ນຈານ, ຈອກກາເຟ, ຈອກກິນນ້ຳ, ຊາມ.**ວັດຖຸອຸປະກອນຢູ່ນອກເຮືອນ** ເຊັ່ນ: ໄມ້ແຫຼມ, ກ້ອນຫີນ, ສັດ( ໝາ, ແມວ ແລະສັດລ້ຽງອື່ນໆ), ໃບໄມ້. **ເຄື່ອງຫຼິ້ນເກົ່າທີ່ມີຢູ່ເຮືອນ** ໝາຍເຖິງເຄື່ອງຫຼິ້ນຂອງເດັກເອງທີ່ມີຢູ່ແລ້ວເຊັ່ນ: ຕຸກກະຕາ, ລົດເດັກຫຼິ້ນ ແລະ ເຄື່ອງຫຼີ້ນອື່ນທີ່ມີຢູ່ເຮືອນ. **ເຄື່ອງຫຼີ້ນທີ່ຫາກໍ່ຊື້ມາໃໝ່ຈາກຮ້ານ** ໝາຍເຖິງ ເຄື່ອງຫຼີ້ນຂອງເດັກທີ່ໄດ້ຊື້ມາໃຫ້ໃໝ່ ເຊັ່ນ: ຕຸກກະຕາ, ລົດເດັກຫຼິ້ນ ແລະ ເຄື່ອງຫຼີ້ນອື່ນໆ. ຖ້າຫາກເດັກ ບໍ່ມັກຫຼີ້ນເຄື່ອງທີ່ກ່າວມາຂ້າງເທິງນັ້ນ

ແລ້ວ ແມ່ນໃຫ້ຂີດອອ້ມເອົາເລກ5 .

| | | |
|---|---|---|
| 3. *ຂ້າພະເຈົ້າມີຄວາມສົນ ໃຈຕໍ່ກັບການຮຽນຮູ້ກ່ຽວກັບເດັກຕໍ່ສິ່ງ ຕ່າງໆເມື່ອເດັກ (ຊື່) ຕອນລາວຢູ່ບ້ານ.*<br><br>ເດັກ(ຊື່)ໄດ້ຫຼີ້ນຫຍັງ ? | **ວັດຖຸອຸປະກອນຢູ່ໃນເຮືອນຄົວ**<br>( ຊາມ, ຈານໃສ່ອາຫານ, ຈອກກາເຟ, ຈອກ ກີນນ້ຳ)............................................1<br>**ວັດຖຸອຸປະກອນຢູ່ນອກເຮືອນ**<br>( ໄມ້ແຫຼມ, ກ້ອນຫີນ, ສັດ, ໃບໄມ້).........2<br>**ເຄື່ອງຫຼິ້ນເກົ່າທີ່ມີຢູ່ເຮືອນ**<br>( ຕຸກກະຕາ, ລົດເດັກຫຼິ້ນ ແລະ ເຄື່ອງຫຼີນອື່ນທີ່ ມີຢູ່ເຮືອນ.........................................3<br>ເຄື່ອງຫຼີ້ນທີ່ຫາກໍ່ຊື້ມາໃໝ່ຈາກຮ້ານ.........4<br>ບໍ່ມັກຫຼີ້ນຫຍັງຈັກຢ່າງທີ່ມີຢູ່ຂ້າງເທີງ.......5 | |

ຄຳຖາມ 4. ແມ່ນຢາກຮູ້ວ່າໃນອາທິດທີ່ຜ່ານມາໄດ້ປ່ອຍໃຫ້ເດັກ(ຊື່)ຫລີ້ນກັບເດັກນ້ອຍຄົນອື່ນທີ່ມີ ອາຍຸຕ່ຳກວ່າ 10 ປີ ຈັກເທື່ອ. ໃຫ້ຂຽນຈຳນວນເທື່ອໃສ່, ຖ້າຫາກບໍ່ໄດ້ປະໃຫ້ເດັກໄດ້ຫຼີ້ນ ແມ່ນ ຂຽນ ເລກ 00,

| | | |
|---|---|---|
| 4.ໃນອາທິດຜ່ານມາທ່ານໄດ້ປະໃຫ້ ເດັກ(ຊື່) ຫຼີ້ນກັບເດັກນ້ອຍຄົນອື່ນໆທີ່ມີ ອາຍຸຕ່ຳກວ່າ10 ປີຈັກເທື່ອ ?<br>*ຖ້າ ບໍ່ແມ່ນ 00* | ຈຳນວນເທື່ອ.............................__ __ | |

ຄຳຖາມ 5. ແມ່ນຢາກຮູ້ວ່າໃນອາທິດຜ່ານມາທ່ານໄດ້ປະໃຫ້ເດັກ(ຊື່)ຫຼີ້ນຄົນດຽວຈັກເທື່ອ ? ໃຫ້ຂຽນຈຳນວນເທື່ອໃສ່, ຖ້າຫາກບໍ່ໄດ້ປະໃຫ້ເດັກໄດ້ຫຼີ້ນຄົນດຽວ ແມ່ນ ຂຽນ ເລກ 00,

| | | |
|---|---|---|
| 5. ໃນອາທິດຜ່ານມາທ່ານໄດ້ປະໃຫ້ ເດັກ(ຊື່)ຫຼີ້ນຄົນດຽວຈັກເທື່ອ ?<br>*ຖ້າ ບໍ່ແມ່ນ 00* | ຈຳນວນເທື່ອ.............................__ __ | |

# ໂມດູນ IV : ວິຕາມິນ A

ໂມດູນນີ້ມີເປົ້າໝາຍເພື່ອຢາກຮູ້ການໄດ້ຮັບຢາວິຕາມິນອາຂອງເດັກພ້ອມທັງສະຖານທີ່ໆໄດ້ຮັບຢາວິຕາມິນອາ.

1. <u>ຄຳຖາມ 1</u> ລູກຂອງທ່ານ (ຊື່ຂອງເດັກ) ໄດ້ຮັບຢາເມັດວິຕາມິນ A ຫລືບໍ່?

ນັກເດີນສຳຫຼວດຕ້ອງໄດ້ສະແດງຢາເມັດວິຕາມິນອາສີແດງໃຫ້ແມ່ຂອງເດັກເບິ່ງ ເພື່ອບໍ່ໃຫ້ຫຼົງກິນຢາອື່ນ ແລ້ວຂີດໝາຍຄຳຕອບໄວ້. ຖ້າຄຳຕອບວ່າ ບໍ່ໄດ້ກິນ ຫຼື ບໍ່ຮູ້ຈັກໃຫ້ຂີດເສັ້ນຜ່ານຄຳຖາມ 2 ແລະ 8 ແລ້ວຜ່ານໄປໂມດູນ V.

| | | |
|---|---|---|
| 1. ລູກຂອງທ່ານ (ຊື່ຂອງເດັກ) ໄດ້ຮັບຢາເມັດວິຕາມິນ A ຫລືບໍ່? | ໄດ້ກິນ.................................................1<br>ບໍ່ໄດ້ກິນ..............................................2<br>ບໍ່ຮູ້ຈັກ...............................................8 | 2⇒ໄປໂມດູນV<br>8⇒ໄປໂມດູນV |

<u>ຄຳຖາມ 2</u> . ໄດ້ຈັກເດືອນມາແລ້ວທີ່ລູກທ່ານ (ຊື່ຂອງເດັກ)ໄດ້ຮັບຢານີ້ເທື່ອສຸດທ້າຍ?

- ໃຫ້ຂຽນຈຳນວນເດືອນໃສ່ຫ້ອງຄຳຕອບ ຖ້າຈຳນວນເດືອນເປັນເລກຕົວດຽວໃຫ້ຂຽນ 0 ກ່ອນ, ຖ້າແມ່ນບໍ່ຮູ້ຈັກໃຫ້ຂີດອ້ອມເອົາເລກ 8.

| | | |
|---|---|---|
| 2. ໄດ້ຈັກເດືອນມາແລ້ວທີ່ລູກທ່ານ (ຊື່ຂອງເດັກ)ໄດ້ຮັບຢານີ້ເທື່ອສຸດທ້າຍ? | ຈຳນວນເດືອນ..............................__ __<br><br>ບໍ່ຮູ້ຈັກ...............................................8 | |

<u>ຄຳຖາມ 3</u> (ຊື່ເດັກ) ໄດ້ຮັບຢານີ້ເທື່ອສຸດທ້າຍຢູ່ໃສ?

ໃຫ້ຂີດອ້ອມຄຳຕອບຕາມສະຖານທີ່ໆໄດ້ລະບຸໄວ້ໃນຂໍ້ 1 ຫາ ຂໍ້ 3, ນອກຈາກ 3 ບ່ອນນີ້ຖ້າວ່າເດັກໄດ້ຮັບວິຕາມິນອາ ຢູ່ບ່ອນອື່ນໆ ກໍໃຫ້ຂີດໝາຍຄຳຕອບຂໍ້ 4 ແລະໃຫ້ບອກແຈ້ງວ່າແມ່ນບ່ອນໃດ ?.

| | | |
|---|---|---|
| 3. (ຊື່ເດັກ) ໄດ້ຮັບຢານີ້ເທື່ອສຸດທ້າຍຢູ່ໃສ? | ໄປກວດຢູ່ຫ້ອງກວດພະຍາດປົກກະຕິ.................1<br>ເດັກເຈັບແລ້ວໄປຫ້ອງກວດພະຍາດ.................2<br>ວັນສັກຢາກັນພະຍາດແຫ່ງຊາດ......................3<br>ອື່ນໆ (ຈົ່ງບອກແຈ້ງ)____________________4<br>ບໍ່ຮູ້ຈັກ..................................................,.8 | |

| ໂມດູນ V : ລ້ຽງລູກດ້ວຍນົມແມ່ |
|---|

ໂມດູນນີ້ແມ່ນຢາກສຶກສາກ່ຽວກັບພຶດຕິກຳການລ້ຽງດູເດັກຂອງແມ່ໂດຍເນັ້ນໃສ່ວ່າເດັກຜູ້ນີ້ເຄີຍກິນນົມແມ່ ຫຼືບໍ່ ?. ຖ້າວ່າເຄີຍກິນແມ່ນໃຫ້ກິນແນວໃດ. ພ້ອມດຽວກັນນັ້ນກໍຢາກຮູ້ກ່ຽວກັບເຫດຜົນການເຊົາໃຫ້ເດັກກິນນົມແມ່ ແລະ ກໍ່ຢາກຮູ້ວ່າ ໃນມື້ວານນີ້ເດັກໄດ້ຮັບອາຫານປະເພດຕ່າງໆຄືແນວໃດ ?

<u>ຄຳຖາມ 1</u> (ຊື່ເດັກ)ຜູ້ນີ້ໄດ້ເຄີຍກິນນົມແມ່ຫລືບໍ່?
ໃຫ້ຂີດອ້ອມຕາມລະຫັດຄຳຕອບ ຖ້າຕອບວ່າ ບໍ່ໄດ້ກິນ ຫຼື ບໍ່ຮູ້ຈັກ ໃຫ້ຂີດອອ້ມເລກ 2 ຫລື ເລກ 8 ແລ້ວໄປຖາມຂໍ້ 3.

| | | |
|---|---|---|
| 1. (ຊື່ເດັກ)ຜູ້ນີ້ໄດ້ເຄີຍກິນນົມແມ່ຫລືບໍ່? | ກິນ....................................................1<br>ບໍ່ໄດ້ກິນ...............................................2<br>ບໍ່ຮູ້ຈັກ.................................................8 | <br>2⇒ ຂໍ້ 3<br>8⇒ ຂໍ້ 3 |

<u>ຄຳຖາມ 2</u> (ຊື່ເດັກ) ຍັງກິນນົມແມ່ຫລືບໍ່? ໝາຍເຖິງປະຈຸບັນນີ້ເດັກຍັງກິນນົມແມຢູ່ບໍ່ ?
ໃຫ້ຂີດອ້ອມຕາມລະຫັດຄຳຕອບ .

| | | |
|---|---|---|
| 2. (ຊື່ເດັກ) ຍັງກິນນົມແມ່ຫລືບໍ່? | ກິນ....................................................1<br>ບໍ່ໄດ້ກິນ...............................................2<br>ບໍ່ຮູ້ຈັກ.................................................8 | |

ຄຳຖາມ 3: . ເລີ່ມແຕ່ມື້ວານນີ້ມາ, ລູກຂອງທ່ານໄດ້ກິນອາຫານດັ່ງຕໍ່ໄປນີ້ຫລືບໍ່?
*ອ່ານແຕ່ລະອັນ ແລະໝາຍຄຳຕອບກ່ອນຈະໄປຫາອາຫານຊະນິດໃໝ່*

ຈົ່ງອານລາຍການອາຫານແຕ່ລະຊະນິດໄປແລ້ວໝາຍອອ້ມຄຳຕອບວ່າເດັກໄດ້ກິນອາຫານເລົ່ານີ້ບໍ່. ທ່ານສາມາດໝາຍໄດ້ຫຼາຍຄຳຕອບ.

| | | |
|---|---|---|
| 3. ເລີ່ມແຕ່ມື້ວານນີ້ມາ, ລູກຂອງທ່ານໄດ້ກິນອາຫານດັ່ງຕໍ່ໄປນີ້ຫລືບໍ່?<br>*ອ່ານແຕ່ລະອັນ ແລະໝາຍຄຳຕອບກ່ອນຈະໄປຫາອາຫານຊະນິດໃໝ່* | | |
| 3.ກ ວິຕາມິນ, ແຮ່ທາດ ຫລື ຢາ? | ກິນ ບໍ່ກິນ ບໍ່ຮູ້ | |

| | | |
|---|---|---|
| 3.ຂ. ນ້ຳລ້າໆ?<br>3.ຄ ນ້ຳຫວານ,ນ້ຳໝາກໄມ້,ນ້ຳຊາ ?<br>3.ງ ນ້ຳທະເລຝຸ່ນ(ORS)?<br>3.ຈ ອາຫານເສີມສຳລັບເດັກ ?<br>3.ສ ນົມປອງ, ນົມສົດ,ນົມຝຸ່ນ,?<br>3.ຊ ອາຫານອອ່ນທີ່ເປັນຂອງແຫລວ ຊະນິດອື່ນໆ?<br>3.ຫ ອາຫານມັນ, ນ້ຳມັນສັດ/ນ້ຳມັນພືດ ? | 3.ກ....................................1 2 8<br>3.ຂ................................... 1 2 8<br>3.ຄ................................... 1 2 8<br>3.ງ.................................. .1 2 8<br>3.ຈ.....................................1 2 8<br>3.ສ.................................... 1 2 8<br>3.ຊ.....................................1 2 8<br>3.ຫ.................................... 1 2 8 | |

ຄຳຖາມ 4 : ຕັ້ງແຕ່ມື້ວານນີ້ມາ,ລູກຂອງທ່ານໄດ້ກິນອາຫານແຂງ,ອາຫານເຄິ່ງແຂງ,ອາຫານອອ່ນທີ່ເປັນຂອງແຫລວແລວອື່ນໆຈັກຄັ້ງ?

ຄຳຖາມນີ້ ແມ່ນຢາກຮູ້ວ່າເດັກໄດ້ກິນຫຍັງຕັ້ງແຕ່ມື້ວານນີ້ມາ ເພື່ອຈະໄຈແຍກການກິນນົມແມ່ພຽງຢ່າງດຽວ. ຄຳຖາມນີ້ ແມ່ນໃຫ້ບັນທຶກເປັນຈຳນວນຄັ້ງທີ່ເດັກໄດ້ກິນ.

| | | |
|---|---|---|
| 4. ຕັ້ງແຕ່ມື້ວານນີ້ມາ, ລູກຂອງທ່ານໄດ້ກິນອາຫານແຂງ,ອາຫານເຄິ່ງແຂງ,ອາຫານອອ່ນທີ່ເປັນຂອງແຫລວແລວອື່ນໆຈັກຄັ້ງ? | ຈຳນວນຄັ້ງ....................................__<br>ບໍ່ຮູ້ຈັກ...........................................8 | |

## ໂມດູນ VI: ການດູແລຮັກສາເດັກ

ຄຳຖາມນີ້ມີເປົາໝາຍເພື່ອຢາກຮູ້ວ່າ ວ່າງບໍ່ດົນມານີ້ ເດັກເຄີຍເປັນພະຍາດຖອກທ້ອງ ຫຼືພະຍາດອື່ນໆໃດໜຶ່ງບໍ່, ແລະຖ້າເຄີຍມີ ເຂົາໄດ້ຮັບການປິ່ນປົວແບບໃດ, ກິນເຂົ້າ ແລະກິນນ້ຳແບບໃດ ໃນໄລຍະເຈັບເປັນ. ການເປັນພະຍາດຖອກທ້ອງ ແມ່ນຖືເອົາການຖ່າຍໜັກເປັນນ້ຳ ແລະສູນເສຍນ້ຳພ້ອມທັງຖ່າຍໜັກ 3 ເທື່ອ ຫຼືຫຼາຍກວ່າ, ຫຼືມີເລືອດປົນໃນອາຈົມໃນມື້ໃດໜຶ່ງ.

ຄຳຖາມ 1: - ຈົ່ງໝາຍຄຳຕອບຂອງແມ່ໂດຍຂີດວົງມົນອ້ອມເອົາລະຫັດທີ່ຕອບໃສ່. ຖ້າຜູ້ຕອບຫາກບໍ່ແນ່ໃຈວ່າຄວາມໝາຍຖອກທ້ອງແປວ່າແນວໃດ ? ທ່ານຕ້ອງອະທິບາຍວ່າມີການຖ່າຍໜັກເປັນນ້ຳ, ຫຼືສູນເສຍນ້ຳພ້ອມອາຈົມ, ຫຼືມີເລືອດປົນໃນອາຈົມ ຫຼາຍກວ່າ 3ຄັ້ງ ຕໍ່ມື້ຂື້ນໄປ. ຕ້ອງແນະນຳໃຫ້ຜູ້ຕອບເຂົາໃຈຄວາມໝາຍ ຂອງຖອກທ້ອງ, ແລະມີການຖອກທ້ອງພາຍໃນ 2 ອາທິດຜ່ານມາເປັນຢ່າງດີເສຍກ່ອນຈິ່ງໃຫ້ຕອບ.

- ຖ້າຫາກເດັກເຄີຍເປັນຖອກທ້ອງພາຍໃນ 2 ອາທິດຜ່ານມາ, ຂີດວົງມົນໃສ່ເລກ 1 ສຳລັບຄຳຕອບວ່າ "ເປັນ" ແລ້ວຖາມຕໍ່ ຂໍ້ 2. ຖ້າເດັກບໍ່ໄດ້ເປັນຖອກທ້ອງພາຍໃນ 2 ອາທິດຜ່ານມາ ຫຼືຜູ້ດູແລເດັກ ຕອບວ່າ " ບໍ່ຮູ້ຈັກ ", ຂີດວົງມົນໃສ່ເລກ 2 ສຳລັບຄຳຕອບວ່າ " ບໍ່ເປັນ " ຫຼືໃສ່ເລກ 8 ສຳລັບຄຳຕອບ " ບໍ່ຮູ້ຈັກ " ແລະກໍ່ຜ່ານໄປຫາຂໍ້ 3

| | | |
|---|---|---|
| 1.ໃນໄລຍະສອງອາທິດຜ່ານມາລູກຂອງທ່ານໄດ້ເປັນຖອກທ້ອງຫລືບໍ່? *ຖອກທ້ອງແມ່ນຕາມຄວາມຮັບຮູ້ຂອງແມ່ ຫລືຖ່າຍເປັນນ້ຳ ສາມເທື່ອຫລືຫລາຍກ່ວານັ້ນຕໍ່ມື້ ຫລື ຖ່າຍມີ ເລືອດ* | ເປັນ.........................................1<br>ບໍ່ເປັນ.......................................2<br>**ບໍ່ຮູ້ຈັກ.....................................8** | <br>2⇒ ຂໍ້ 3<br>8⇒ ຂໍ້ 3 |

<u>ຄຳຖາມ 2</u>: ລູກຂອງທ່ານໄດ້ດື່ມສິ່ງດັ່ງຕໍ່ໄປນີ້ບໍ່ໃນເວລາເປັນຖອກທ້ອງເທື່ອສຸດທ້າຍ ?

- ພວກເຮົາ ແມ່ນຢາກຮູ້ເວລາຖອກທ້ອງຜ່ານມາ ເດັກໄດ້ຮັບນ້ຳດື່ມຊະນິດໃດແນ່. ໃຫ້ຕັ້ງຄຳຖາມເປັນຂໍ້ໆໄປ: ເດັກໄດ້ກິນນ້ຳນົມແມ່ບໍ່? ເດັກໄດ້ຮັບນ້ຳແກງ, ນ້ຳເຂົ້າ ຫຼືເຂົາຕົມໃດໜຶ່ງບໍ່ ? ຫຼືອື່ນໆ. ຂີດວົງມົນໃສ່ລະຫັດ ສະເພາະແຕ່ລະຄຳຕອບ: ໃສ່ເລກ 1 ຖ້າວ່າ " ກິນ " , ໃສ່ເລກ 2 ຖ້າວ່າ " ບໍ່ກິນ " , ແລະໃສ່ເລກ 8 ຖ້າວ່າ " ບໍ່ຮູ້ຈັກ ". ທ່ານຈະໄດ້ຮັບລາຍການນ້ຳດື່ມຕ່າງໆ ທີ່ຄົວເຮືອນນຳໃຊ້ເຊັ່ນ : ນ້ຳດື່ມທີ່ມີນ້ຳຕານ ປະສົມເກືອ, ນ້ຳຢາຄູ, ແລະອື່ນໆ. ຖ້າຜູ້ຕອບວ່າແມ່ນ "ນ້ຳ", ໃຫ້ທ່ານຖາມຕໍ່ໄປວ່າ ເດັກໄດ້ກິນແຕ່ນ້ຳຢ່າງດຽວບໍ່ ? ຫຼືໄລຍະດຽວກັນ ເດັກຍັງໄດ້ຮັບອາຫານອື່ນໆອີກ. ໃຫ້ທ່ານຖາມເຖິງທາດແຫຼວອື່ນໆອີກທີ່ເປັນສິ່ງຕ້ອງຫ້າມ ບໍ່ໃຫ້ໃຊ້ກັບເດັກຖອກທ້ອງ ຊຶ່ງແນະນຳຈາກໂຄງການຄວບຄຸມພະຍາດຖອກທ້ອງ ທ້ອງຖິ່ນ : ທ່ານກໍ່ຈະໄດ້ຮັບບັນຊີເລົ່ານັ້ນ ຕື່ມ. ຖ້າຄຳຕອບເປັນເລກ1 (ທີ່ໄດ້ຕອບໄປແລ້ວ) ທ່ານຕ້ອງຜ່ານໄປຄຳຖາມ 5.

| | | |
|---|---|---|
| 2. ລູກຂອງທ່ານໄດ້ດື່ມສິ່ງດັ່ງຕໍ່ໄປນີ້ ຫລືບໍ່ໃນເວລາການເປັນຖອກທ້ອງເທື່ອສຸດທ້າຍ?<br>*ອ່ານແຕ່ລະອັນ ແລະໝາຍຄຳຕອບກ່ອນຈະໄປຫາອາຫານຊະນິດໃໝ່* | ກິນ ບໍ່ກິນ ບໍ່ຮູ້ຈັກ | |
| 2.ກ ນົມແມ່? | 3.ກ....................................1 2 8 | |
| 2.ຂ ແກງ, ນ້ຳເຂົ້າ, ເຂົ້າຕົ້ມ? | 3.ຂ ...................................1 2 8 | |
| 2.ຄ ນ້ຳໝາກໄມ້ (ນ້ຳໝາກພ້າວ, ......) | 3.ຄ....................................1 2 8 | |
| 2.ງ ນ້ຳທະເລຝຸ່ນ ORS? | 3.ງ ................................... 1 2 8 | 1⇒ ຂໍ້ 5 |
| 2.ຈ ນົມອື່ນໆ ຫລື ນົມຝຸ່ນສຳລັບເດັກ? | 3.ຈ....................................1 2 8 | |
| 2.ສ ນ້ຳ ແລະອາຫານໃນບາງຄາບ? | 3.ສ ...................................1 2 8 | |
| 2.ຊ ນ້ຳລ້າງໆ? | 3.ຊ....................................1 2 8 | |

| | | |
|---|---|---|
| 2.ຍ ນ້ຳຫວານ (ເປບຊີ, ໂຄລາ)?<br>2.ດ ບໍ່ໄດ້ກິນ? | 3.ຍ ...................................1 2 8<br>3.ດ ...................................1 2 8 | |

ຄຳຖາມ 3: ໃນໄລຍະທີ່ (ຊື່ເດັກ) ຖອກທ້ອງເທື່ອສຸດທ້າຍລາວ ໄດ້**"ດື່ມ"** ໜ້ອຍກວ່າເກົ່າ, ເທົ່າເກົ່າ ຫລືດື່ມຫລາຍກວ່າເກົ່າບໍ່ ? - ຖ້າເດັກຂາດນ້ຳ, ເດັກອາດດື່ມນ້ຳຫຼາຍກວ່າປົກກະຕິ. ພວກເຮົາພຽງ ຢາກຮູ້ວ່າໄລຍະການເຈັບເປັນ ການດື່ມນ້ຳຂອງເດັກມີການປ່ຽນແປງບໍ່. ໃຫ້ຕັ້ງຄຳຖາມເພື່ອເສີມໃຫ້ ຄົບຖ້ວນ. ໃຫ້ອ່ານເນື້ອໃນຄຳຖາມ ແລະຂີດວົງມົນໃສ່ລະຫັດ ຕາມຄຳຕອບຂອງແມ່ເດັກນ້ອຍ.

- ສະເພາະເດັກນ້ອຍທີ່ໄດ້ເປັນຖອກທ້ອງພາຍໃນ 2 ອາທິດຜ່ານມາ, "ການເຈັບເປັນ" ໃນ ຄຳຖາມນີ້ ແລະຄຳຖາມຕໍ່ໄປແມ່ນໝາຍເຖິງ ການເປັນຖອກທ້ອງແຕ່ຢ່າງດຽວ. ໃຫ້ແຍກອອກຈາກ ການເຈັບເປັນໃດໜຶ່ງ ທີ່ເດັກສາມາດມີພ້ອມກັນໄດ້.

- ໃຫ້ກຳເອົາການຄຳນວນຂອງຜູ້ດູແລເດັກ ກ່ຽວກັບບໍລິມາດນ້ຳດື່ມທີ່ເດັກໄດ້ຮັບທັງໝົດ. ໃຫ້ນັບກວມເອົານ້ຳ ທີ່ໄດ້ກິນເຂົາລວມທັງໝົດ, ບໍ່ແມ່ນຈະນັບສະເພາະນ້ຳດື່ມໃດໜຶ່ງ.
ຕົວຢ່າງ: ນ້ຳທຳມະດາ, ນ້ຳຊາ, ນ້ຳໝາກໄມ້, ນ້ຳນົມ ແລະນ້ຳສຳເລັດຮູບ ຫຼືນ້ຳ ໂອລາລິດ.

- ນຳໃຫ້ຊອກຮູ້ໄດ້ວ່າ ສິ່ງທີ່ລາວໄດ້ປະຕິບັດຜ່ານມາ, ແຕ່ບໍ່ໃຫ້ກຳເອົາ ສິ່ງທີ່ຜູ້ດູແລຂອງ ເດັກຄວນຈະໄດ້ເຮັດຜ່ານມາ. ຄຳຕອບທີ່ວ່າ "ເດັກທີ່ຖອກທ້ອງແມ່ນຕ້ອງການນ້ຳເພີ່ມຂຶ້ນ" ແມ່ນບໍ່ ພຽງພໍ. ທ່ານຈະຕ້ອງຖາມຕື່ມອີກ; ແຕ່ວ່າໃນໄລຍະເປັນຖອກທ້ອງ ຫຼືການເຈັບໄຂ້ອື່ນໆ, ຖ້າມີ ລູກ ຂອງທ່ານໄດ້ດື່ມນ້ຳຫຼາຍເທົ່າໃດ ?

- ມັນອາດຈະເປັນການຫຍຸ້ງຍາກ ທີ່ຈະຄຳນວນບໍລິມາດນ້ຳນົມ ທີ່ເດັກໄດ້ຮັບ. ຜູ້ດູແລເດັກ ອາດເຮັດການຄຳນວນບໍລິມາດ ໂດຍອີງການເບິ່ງແຍງດູແລເດັກ ໜ້ອຍຫຼາຍປານໃດ ?

| | | |
|---|---|---|
| 3. ໃນໄລຍະທີ່ (ຊື່ເດັກ) ຖອກທ້ອງ ເທື່ອສຸດທ້າຍລາວ ໄດ້**"ດື່ມ"** ໜ້ອຍ ກວ່າເກົ່າ, ເທົ່າເກົ່າ ຫລືດື່ມຫລາຍກວ່າເກົ່າບໍ່ ? | ດື່ມໜ້ອຍກວ່າເກົ່າຫລາຍ....................1<br>ດື່ມເທົ່າເກົ່າ.....................................2<br>ດື່ມຫລາຍກວ່າເກົ່າ.............................3<br>ບໍ່ຮູ້ຈັກ............................................8 | |

<u>ຄຳຖາມ 4:</u> ໃນໄລຍະທີ່(ຊື່ເດັກ)ຖອກທອ້ງເທື່ອສຸດທ້າຍລາວໄດ້ **"ກິນອາຫານ"** ຫລາຍກວ່າເກົ່າ, ໜ້ອຍກວ່າເກົ່າ ຫລື ປົກະຕິເທົ່າເກົ່າ? - ໃນໄລຍະມີການຖອກທ້ອງ ຫຼືເຈັບປ່ວຍໃດໜຶ່ງ ເດັກອາດ ປ່ຽນແປງໃນຄວາມຕ້ອງການອາຫານ. ໃຫ້ຕັ້ງຄຳຖາມເພື່ອເສີມໃສ່ໃຫ້ຄົບຖ້ວນ. ຖ້າຄຳຕອບຂອງ ແມ່ວ່າ "ກິນໜ້ອຍກວ່າແຕ່ກ່ອນ" ໃຫ້ຖາມຍ້ອນລົງຕື່ມເພື່ອຊອກຮູ້ວ່າແມ່ຄິດວ່າຈຳນວນຫຼາຍເທົ່າ ໃດ ຈຶ່ງວ່າໜ້ອຍ ຫຼືຫຼາຍກວ່າເກົ່າ. ຂີດວົງມົນໃສ່ລະຫັດຄຳຕອບ.

- ຈຸດເລັ່ງໃນຄຳຖາມນີ້ ແມ່ນຊອກຮູ້ວ່າ ເວລານັ້ນເດັກໄດ້ກິນອາຫານຫຼາຍເທົ່າໃດ. ຖ້າວ່າຜູ້ດູແລເດັກຫາກໄດ້ເອົາອາຫານໃຫ້ກິນຫຼາຍກວ່າເກົ່າ, ແຕ່ວ່າເດັກໄດ້ກິນໜ້ອຍ, ຄຳຕອບກໍ່ແມ່ນ " ໜ້ອຍກວ່າເກົ່າ " ຂີດວົງມົນໃສ່ 2.

- ຖ້າວ່າເດັກນ້ອຍຍັງນ້ອຍຫຼາຍ (ຍັງບໍ່ທັນກິນອາຫານໄດ້ເທື່ອ) ແລະແມ່ກໍ່ຕອບວ່າເດັກກິນແຕ່ນ້ຳ ຫຼືນ້ຳນົມເທົ່ານັ້ນ, ຈຶ່ງບໍ່ຈຳເປັນຖາມລົງຕື່ມເລີຍ, ເພາະຖືວ່າການດື່ມ ແລະການກິນຂອງເດັກອ່ອນແມ່ນຖືເປັນອັນດຽວກັນ. ຂີດວົງໃສ່ຄຳຕອບ "ກິນ" ຊຶ່ງເປັນຄຳຕອບທີ່ໃກ້ກວ່າໝູ່ກັບດື່ມ ສຳລັບຄຳຖາມຂໍ້ 4.

| | | |
|---|---|---|
| 4. ໃນໄລຍະທີ່(ຊື່ເດັກ)ຖອກທ້ອງເທື່ອສຸດທ້າຍລາວໄດ້ **"ກິນອາຫານ"** ຫລາຍກວ່າເກົ່າ, ໜ້ອຍກວ່າເກົ່າ ຫລືປົກະຕິເທົ່າເກົ່າ?<br>*ຖ້າກິນໜ້ອຍໃຫ້ຖາມ: ໜ້ອຍຫລາຍບໍ່ ຫລື ໜ້ອຍໆນຶ່ງ?* | ບໍ່ກິນ....................................................1<br>ກິນໜ້ອຍກວ່າເກົ່າຫລາຍ..........................2<br>ກິນໜ້ອຍກວ່າເກົ່າ...................................3<br>ກິນເທົ່າປົກະຕິ.......................................4<br>ກິນຫລາຍກວ່າເກົ່າ.................................5<br>ບໍ່ຮູ້ຈັກ................................................8 | |

<u>ຄຳຖາມ 5</u>: ໃນສອງອາທິດຜ່ານມາ (ຊື່) ເດັກ ມີອາການໄອ ຫລືບໍ່?

- " ການເຈັບເປັນພ້ອມມີໄອ " ໄຂ້ຈັບໜາວ ຫຼືມີການເຈັບເປັນທາງລະບົບຫາຍໃຈຮຸນແຮງພ້ອມທັງໄອ. ຖ້າຜູ້ດູແລເວົ້າວ່າ "ລາວໄອຕະລອດ" ຫຼື "ລາວໄດ້ໄອມາເປັນເດືອນແລ້ວ" ບໍ່ໃຫ້ຖືວ່າ"ເຈັບເປັນພ້ອມມີໄອ" ເພາະມັນແມ່ນບັນຫາຊຳເຮື້ອແລ້ວ. ຖ້າຄຳຕອບວ່າ " ບໍ່ມີ " ຫຼື " ບໍ່ຮູ້ຈັກ " ຂີດວົງມົນໃສ່ລະຫັດຄຳຕອບ ແລະຜ່ານໄປຂໍ້ 12. ຖ້າວ່າອາການເຈັບເປັນໄດ້ເລີ້ມມາແຕ່ດົນແລ້ວ ແຕ່ຍັງສືບຕໍ່ມາຮອດໄລຍະ 2 ອາທິດຜ່ານມາ, ຕ້ອງໃຫ້ຖືວ່າຄຳຕອບເປັນ "ໄອ"

| | | |
|---|---|---|
| 5. ໃນສອງອາທິດຜ່ານມາ (ຊື່) ເດັກ ມີອາການໄອ ຫລືບໍ່? | ໄອ.......................................................1<br>ບໍ່ໄອ....................................................2<br>ບໍ່ຮູ້ຈັກ.................................................8 | <br>2⇒ ຂໍ້12<br>8⇒ ຂໍ້12 |

ຄຳຖາມ 6: ໃນເວລາ (ຊື່) ມີອາການໄອ , ລາວຫາຍໃຈໄວກ່ວາປົກະຕິ, ຫາຍໃຈສັ້ນ, ຫາຍໃຈໄວ ຫລືຫາຍໃຈຍາກ?

- ຄຳຖາມນີ້ໄດ້ຕັ້ງຂຶ້ນເພື່ອຊອກຮູ້ວ່າ ເດັກໄດ້ມີ ຫຼື ມີອາການເຈັບເປັນ ທີ່ຮຽກຮ້ອງໃຫ້ມີການກວດຈາກທ່ານໝໍປິ່ນປົວ (ຊຶ່ງໄດ້ລະບຸໄວ້ໃນໂຄງການເຊື່ອມສານ ກັນພະຍາດຖອກທ້ອງ ແລະອັກເສບລະບົບຫາຍໃຈຮຸນແຮງ). ຖ້າຜູ້ດູແລເດັກຖາມວ່າ "ການຫາຍໃຈໄວແມ່ນຫຍັງ? ທ່ານຄວນຕອບວ່າ" ເວລາເດັກນອນພັກຜ່ອນ, ເຮົາສັງເກດເຫັນວ່າລາວຫາຍໃຈໄວກວ່າປົກກະຕິ" ຫຼືກໍ່ຕອບວ່າ "ສັງ

ເກດເຫັນວ່າ ເດັກໄດ້ມີບັນຫາກັ້ນການຫາຍໃຈ, ຫາຍໃຈຍາກ, ຫຼືທ່ານອາດເຫັນຄຳອະທິບາຍແບບອື່ນ ພາຍຫຼັງທີ່ໄດ້ມີການທົດສອບຄຳຖາມ ແລະປັບໃຫ້ເຂົ້າກັບຄວາມເຂົ້າໃຈ ຂອງທ້ອງຖິ່ນ.

- ບາງເຂດຊຸມຊົນກໍ່ຈະມີສັບໃຊ້ສະເພາະຂອງເຂົາ ກ່ຽວກັບການຫາຍໃຈໄວ (ຫາຍໃຈສ້າວ). ຂີດວົງໃສ່ລະຫັດຍ່ອຍ. ຖ້າຄຳຖາມຕອບວ່າ " ມີ "ໃຫ້ຖາມຕໍ່ຂໍ້ 7 . ຖ້າຄຳຕອບວ່າ " ບໍ່ມີ '' ຫຼື " ບໍ່ຮູ້ຈັກ '' ກໍ່ຜ່ານໄປຄຳຖາມ 12,.

| | | |
|---|---|---|
| 6. ໃນເວລາ (ຊື່) ມີອາການໄອ , ລາວຫາຍໃຈໄວກ່ວາປົກະຕິ, ຫາຍໃຈສັ້ນ, ຫາຍໃຈໄວ ຫລືຫາຍໃຈຍາກ? | ມີ......................................................1<br>ບໍ່ມີ....................................................2<br>ບໍ່ຮູ້ຈັກ.................................................8 | <br>2⇒ ຂໍ້12<br>8⇒ ຂໍ້12 |

<u>ຄຳຖາມ 7</u>: ອາການຫາຍໃຈໄວແມ່ນມາຈາກບັນຫາໜ້າເອິກ ຫລືຕັນດັງ?

ຄຳຖາມນີ້ມີເປົ້າໝາຍຊອກຮູ້ວ່າ ມີບັນຫາໃດໜຶ່ງທີ່ຮຽກຮ້ອງໃຫ້ມີການກວດຈາກທ່ານໝໍບໍ່, ຊຶ່ງຈະບໍ່ແມ່ນໄຂ້ໜາວທຳມະດາແລ້ວ. ຖ້າທ່ານໝາຍວົງມົນໃສ່ 2 ແມ່ນ "ບັນຫາຈາກໜ້າເອິກ", 3 ແມ່ນ "ຈາກ2ຢ່າງ", ຫຼື 8 ແມ່ນ " ບໍ່ຮູ້ຈັກ ", ຜ່ານໄປຫາຄຳຖາມຕໍ່ໄປ. ຖ້າບັນຫາແມ່ນເກີດຈາກຕັນດັງ (1) , ຂ້າມໄປຄຳຖາມ 12.

| | | |
|---|---|---|
| 7. ອາການຫາຍໃຈໄວແມ່ນມາຈາກບັນຫາໜ້າເອິກ ຫລືຕັນດັງ? | ຕັນດັງ...............................................1<br>ບັນຫາໜ້າເອິກ.....................................2<br>ທັງສອງ..............................................3<br>ບໍ່ຮູ້ຈັກ................................................8 | 1⇒ ຂໍ້12 |

<u>ຄຳຖາມ 8</u>: ທ່ານໄດ້ໄປປຶກສາແນະນຳ ຫລື ໄປປິ່ນປົວບໍ່?

- "ການໄປຊອກຫາປິ່ນປົວນອກເຮືອນ" ໝາຍຄວາມວ່າໄປປຶກສານຳບຸກຄົນຢູ່ນອກຄົວເຮືອນ ເພື່ອຂໍຄຳແນະນຳການຮັກສາ ແລະປິ່ນປົວ, ລວມທັງຄົນຂ້າງບ້ານ ເພື່ອໄປໂຮງໝໍ ຫຼືເພື່ອຈັດຕັ້ງ ພິທີຮີດຄອງຕ່າງໆ ໃນນາມໃຫ້ເດັກຜູ້ເຈັບປ່ວຍ. ຖ້າມີທ່ານໝໍ ຫຼືແພດໝໍອື່ນໆ ມາກວດແລະຮັກສາຢູ່ເຮືອນກໍ່ແມ່ນໄດ້ນັບເອົາຄືກັນ. ເວລາຜູ້ດູແລເດັກໄດ້ໄປປຶກສານຳແພດໝໍ ເດັກບາງຄັ້ງອາດຈະໄດ້ຕິດຕາມ ແລະບໍ່ໄດ້ຕິດຕາມໄປນຳ. ຕົວຢ່າງ: ການອອກໄປເພື່ອຊື້ຢາ ແຕ່ບໍ່ໄດ້ເອົາເດັກໄປນຳ ກໍ່ໃຫ້ຖືວ່າ "ໄປຊອກຫາປິ່ນປົວ".

- ຖ້າຄຳຕອບວ່າ " ໄດ້ໄປ ", ໃຫ້ສືບຕໍ່ໄປຂໍ້ 9. ຖ້າບໍ່ໄດ້ໄປ ຫຼື ບໍ່ຮູ້ຈັກ ກໍ່ຂ້າມໄປຂໍ້ 12.

| | | |
|---|---|---|
| 8. ທ່ານໄດ້ໄປປຶກສາແນະນຳ ຫລືໄປປິ່ນປົວບໍ່? | ໄດ້ໄປ.................................................1<br>ບໍ່ໄດ້ໄປ...............................................2<br>ບໍ່ຮູ້ຈັກ................................................8 | <br>2⇒ ຂໍ້10<br>8⇒ ຂໍ້10 |

ຄຳຖາມ 9: ທ່ານໄປຮັບການປິ່ນປົວຢູ່ໃສ ຫລືຢູ່ບ່ອນໃດແດ່?

ທ່ານພະຍາຍາມບໍ່ໃຫ້ຕັດຄຳຖາມ ຫຼືຊ່ວຍໃຫ້ຕອບ, ແຕ່ພະຍາຍາມຟັງຜູ້ຕອບເວົ້າມາຈົນໝົດວ່າ ຢູ່ໃສທີ່ທ່ານໄດ້ພາເດັກໄປປິ່ນປົວ. ໃຫ້ຂີດວົງມົນໃສ່ລະຫັດຄຳຕອບ ຕາມທີ່ໃຫ້ການມາ. ຖ້າມີບາງບ່ອນທີ່ຜູ້ໃຫ້ສຳພາດ ຫາກໄດ້ກ່າວອອກມາ ແຕ່ບໍ່ໄດ້ລະບຸໄວ້ໃນຄຳຕອບ ກໍ່ໃຫ້ໝາຍໃສ່"ອື່ນໆ".

| | | |
|---|---|---|
| 9. ທ່ານໄປຮັບການປິ່ນປົວຢູ່ໃສ ຫລືຢູ່ບ່ອນໃດແດ່?<br><br>*ໃຫ້ອ້ອມທຸກຄຳຕອບ ທີ່ຕອບມາ ແຕ່ບໍ່ໃຫ້ບອກຄຳຕອບກ່ອນ* | ໂຮງໝໍ.............................................01<br>ສຸກສາລາ..........................................02<br>ຮ້ານຂາຍຢາຕາມບ້ານ..........................03<br>ອາສາສະມັກບ້ານ/ໝໍຕຳແຍ....................04<br>ກລີນິກແມ່ແລະເດັກ.............................05<br>ແພດເອກະຊົນ....................................06<br>ໝໍຢາພື້ນເມືອງ...................................07<br>ຮ້ານຂາຍຢາ ຫລືຜູ້ຂາຍຢາ......................08<br>ຫາໝູ່/ພີ່ນ້ອງນອກເຮືອນ........................09<br><br>ອື່ນໆ, (ຈົ່ງບອກແຈ້ງ)______________10 | |

ຄຳຖາມ 10. ເດັກ (ຊື່)ໄດ້ກິນຢາບໍ່ ?ໃຫ້ທ່ານໝາຍຄຳຕອບໃສ່ ວ່າ: ເດັກໄດ້ກິນ ຫຼືບໍ່ໄດ້ກິນ, ຫຼືວ່າ:ບໍ່ຮູ້. ຖ້າບໍ່ໄດ້ກິນ ຫຼື ບໍ່ຮູ້ ຂ້າມໄປຫາຂໍ້ 12.

| | | |
|---|---|---|
| 10.ເດັກ (ຊື່)ໄດ້ກິນຢາບໍ່ ? | ໄດ້ກິນ............................................1<br>ບໍ່ໄດ້ກິນ..........................................2<br>ບໍ່ຮູ້................................................8 | <br>2⇒ ຂໍ້12<br>8⇒ ຂໍ້12 |

ຄຳຖາມ 11. ຖ້າໄດ້ກິນ ແມ່ນຢາຫຍັງ ?ຖ້າຄຳຕອບຢູ່ໃນຄຳຖາມ10 ຕອບວ່າ: ໄດ້ກິນຢາ, ທ່ານຕ້ອງຖາມຕໍ່ຄຳຖາມນີ້ ວ່າ: ໃຫ້ກິນຢາຫຍັງ,. ສາມາດຕອບໄດ້ຫຼາຍຄຳຕອບ.

| | | |
|---|---|---|
| 11. ຖ້າໄດ້ກິນ ແມ່ນຢາຫຍັງ ? | ຢາແອນຕິບີໂອຕິກ( Antibiotic )..........1<br>ປາລາເຊຕາໂມນ,ປານາໂດນ,ອາຊີຕາມີໂນເພັນ (Paracetamol,Panadol, Acetaminophen )..........................2<br>ແອສປີຣິນ (Aspirin )........................3 | |

| | | |
|---|---|---|
| | ອີບູໂພຣບເຟັນ ( Ibupropfen )...........4<br>ຢາອື່ນໆ ( ບອກແຈ້ງ).........................6<br>ບໍ່ຮູ້.................................................8 | |

ຄຳຖາມ 12. **ກວດຄືນຄຳຖາມ 2 ພາກທີ I : ຖ້າເດັກມີອາຍຸຕ່ຳກວ່າ 3 ປີ ແມ່ນ ຖາມຕໍ່ ຄຳຖາມ 13. ຖ້າຫຼາຍກວ່າ3ປີ ແມ່ນ ຂ້າມໄປຄຳຖາມ 14.**

ຄຳຖາມ 13. ໄລຍະຜ່ານມາທ່ານໄດ້ມ້ຽນ ຂີ້ (ຖ່າຍໜັກ ) ຂອງເດັກ (ຊື່) ດ້ວຍວິທີໃດ ?ຄຳຖາມນີ້ແມ່ນຢາກຮູ້ເຖິງການຮັກສາຄວາມສະອາດໃຫ້ເດັກ ໃນເມື່ອເດັກທ່າຍໜັກ( ເດັກທີ່ມີອາຍຸຕ່ຳກວ່າ 3 ປີ).

| | | |
|---|---|---|
| 13.ໄລຍະຜ່ານມາທ່ານໄດ້ມ້ຽນ ຂີ້ (ຖ່າຍໜັກ ) ຂອງເດັກ (ຊື່) ດ້ວຍວິທີໃດ ? | ເດັກຖ່າຍໜັກໃສ່ວິດຖາຍເລີຍ...........01<br>ຖ່າຍໃສໂຖ/ ແລ້ວເອົາໄປລ້າງລົງວິດ....02<br>ຖ່າຍໃສໂຖ/ແລ້ວເອົາໄປລ້າງລົງຮ່ອງລະບາຍນ້ຳ.............................................03<br>ເອົາໄປຖີ້ມລົງ ຖົງຂີ້ເຍື່ອ...................04<br>ຂຸດຂຸມຝັງ.....................................05<br>ໂຍນຖີ້ມໄປທົ່ວທີບ.........................06<br>ອື່ນໆ ( ບອກແຈ້ງ )........................96<br>ບໍ່ຮູ້..............................................98 | |

ຄຳຖາມ 14: ບາງຄັ້ງເດັກແມ່ນເຈັບໜັກ(ໄຂ້) ແລະຄວນເອົາໄປຫາສະຖານທີບໍລິການສຸຂະພາບໂດຍທັນທີ່, ມີ ອາການຂະນິດໃດແດ່ທີ່ທ່ານຕ້ອງຮີບພາລູກໄປຫາແພດ ຫລືໂຮງໝໍໃນທັນທີທັນໃດ?

- ຄຳຖາມນີ້ຕ້ອງໄດ້ຖາມນຳຜູ້ດູແລເດັກແຕ່ລະຄົນ. ຖ້າວ່າແມ່ ຫຼືຜູ້ດູແລເດັກ ຫາກໄດ້ຮັບຜິດຊອບເດັກຕ່ຳກວ່າ 5ປີຫຼາຍຄົນ, ຫຼັງຈາກໄດ້ສຳເລັດຕັ້ງຄຳຖາມ ໃຫ້ເດັກຜູ້ທີ່ 1 ແລ້ວ, ສືບຕໍ່ຖາມຄົນຕໍ່ໄປ.

- ບໍ່ໃຫ້ຕັດຄຳຕອບໂດຍອ່ານຜ່ານອາການເຈັບ ທີ່ນອນຢູ່ໃນຄຳຕອບນັ້ນ. ຖ້າວ່າຜູ້ດູແລເດັກຫາກກ່າວເຖິງອາການໃດໜຶ່ງ ແລ້ວກໍ່ຢຸດເວົ້າ, ໃຫ້ທ່ານສືບຕໍ່ຖາມມີອາການໃດອີກບໍ່? ໄປຈົນກວ່າວ່າລາວຈະເຂົ້າໃຈຄວາມໝາຍຂອງທ່ານ ແລະລາວກໍ່ໄດ້ເລົ່າອາການໃຫ້ທ່ານຮູ້ຈົນໝົດແລ້ວ. ຖ້າຫາກທ່ານບໍ່ແນ່ໃຈວ່າ ອາການໃດໜຶ່ງໂດຍສະເພາະທີ່ແມ່ໄດ້ເລົ່າມາ ບໍ່ໄດ້ຢູ່ໃນລາຍການຄຳຕອບ, ຈົ່ງບັນທຶກລະອຽດໄວ້ ແລະໄປປຶກສານຳຜູ້ຕິດຕາມກວດກາຕາມພາຍຫຼັງ.

| | | |
|---|---|---|
| 14. ບາງຄັ້ງເດັກແມ່ນເຈັບໜັກ(ໄຂ້) ແລະຄວນເອົາໄປຫາສະຖານບໍລິການສຸຂະພາບໂດຍທັນທີ່, ມີ ອາການຊະນິດໃດແດ່ທີ່ທ່ານຕ້ອງຮີບພາລູກໄປຫາແພດ ຫລືໂຮງໝໍໃນທັນທີທັນໃດ?<br><br>*ໃຫ້ສືບຕໍ່ຖາມຫລາຍໆອາການຈົນກ່ວາແມ່ບໍ່ສາມາດບອກໄດ້ ໝາຍອາການທັງໝົດທີ່ເຂົາເຈົ້າຕອບມາແຕ່ ບໍ່ໃຫ້ບອກຄຳຕອບເຂົາເຈົ້າກ່ອນ* | ເດັກດື່ມບໍ່ໄດ້ ຫລືກິນນົມແມ່ບໍ່ໄດ້........01<br>ເດັກອາການບໍ່ດີຂື້ນ/ ເຈັບກ່ອນເກົ່າ......02<br>ເດັກມີໄຂ້......................................03<br>ເດັກຫາຍໃຈໄວ..............................04<br>ເດັກຫາຍໃຈຍາກ............................05<br>ເດັກຖ່າຍອາຈົມປົນເລືອດ..................06<br>ເດັກດື່ມບໍ່ໄດ້ດີ................................07<br>ອື່ນໆ(ຈົ່ງບອກແຈ້ງ)______________08<br>ອື່ນໆ(ຈົ່ງບອກແຈ້ງ)______________09<br>ອື່ນໆ(ຈົ່ງບອກແຈ້ງ)______________10 | |

## ໂມດູນ VII : ການສັກຢາກັນພະຍາດ

ພາກນີ້ ແມ່ນສຳພາດແມ່ ແລະຖາມເຖິງລູກຂອງເຂົາເຈົ້າທີ່ມີອາຍຸຕ່ຳກ່ວາ 5 ປີ, ຜູ້ທີ່ໄດ້ຮັບການສັກຢາກັນວັນນະໂລກ (ເບເຊເຊ (BCG), ສັກຢາກັນຄໍຕີບ, ໄອໄກ່, ບາດທະຍັກ, ຢອດຢາປ້ອງກັນເປ້ຍລ່ອຍ ແລະພະຍາດໝາກແດງເຊິ່ງຈະຕ້ອງສັກປ້ອງກັນກ່ອນເດັກອາຍຸ 1 ປີ.
ກ່ອນອື່ນນັກເດີນສຳຫລວດຕ້ອງຖາມ ແລະຂໍເບິ່ງບັດສັກຢາ ແລະ ຢອດຢາໃນແຕ່ລະຄັ້ງ.

ຄຳຖາມ1: ມີບັດບັນທຶກການສັກຢາກັນພະຍາດສຳຫລັບ (ຊື່ເດັກ)ຫລືບໍ່?

ກໍລະນີບໍ່ມີບັດສັກຢາ, ນັກເດີນສຳຫລວດຈະຕ້ອງໄດ້ຖາມຄຳຖາມທີ່ມີໃນໃບສອບຖາມເພື່ອຊອກຫາຂໍ້ມູນທີ່ໃກ້ຄຽງກັບຄວາມຈິງທີ່ສຸດ. ການຈົດກ່າຍຄຳຕອບທີ່ຖືກຕ້ອງ ແມ່ນພຽງແຕ່ຂຽນລະຫັດທີ່ຖືກຕ້ອງໃສ່ໃນແຖວຂອງເດັກ. ມີ 3 ຄຳຕອບໃຫ້ເລືອກ:
ຄຳຕອບ “1” ແມ່ນໝາຍເຖິງໄດ້ສັກຢາປ້ອງກັນ.
ຄຳຕອບ “2” ແມ່ນໝາຍເຖິງບໍ່ໄດ້ສັກຢາປ້ອງກັນ ແລະ ຄຳຕອບ “8” ແມ່ນໝາຍເຖິງແມ່ບໍ່ຮູ້ລູກຕົນໄດ້ສັກຢາຫລືບໍ່?

ກໍລະນີຄຳຕອບແມ່ນ “1”ທ່ານຕ້ອງກວດເບິ່ງວັນ, ເດືອນ, ປີຂອງການສັກຢາໃນແຕ່ລະເຂັມ ຫລືໄດ້ຈາກຄຳຕອບແມ່.

| | | |
|---|---|---|
| 1. ມີບັດບັນທຶກການສັກຢາກັນພະຍາດສຳຫລັບ (ຊື່ເດັກ)ຫລືບໍ່? | ມີ....................................................1<br>ບໍ່ມີ..................................................2<br>**ບໍ່ຮູ້ຈັກ...............................................8** | <br>2⇒ ຂ10<br>8⇒ ຂໍ້ 10 |

ຄຳຖາມ 2,3,4,5,6,7,8 ແມ່ນຖາມກ່ຽວກັບການສັກຢາກັນພະຍາດຕ່າງໆ. ໃນຄຳຖາມເຫລົ່ານີ້ ນັກເດີນສຳຫລວດຕ້ອງຈົດກ່າຍເອົາຂໍ້ມູນໂດຍກົງຈາກບັດສັກຢາຂອງເດັກແຕ່ລະຄົນ ຕາມລາຍການລຸ່ມນີ້ :

| *ຈົ່ງກ່າຍວັນທີ່ການສັກຢາກັນພະຍາດທັງໝົດ* | ວັນທີສັກຢາກັນພະຍາດ | | | | | | | | |
|---|---|---|---|---|---|---|---|---|---|
| | ວັນທີ່ | | ເດືອນ | | ປີ | | | | |
| 2. ເບເຊເຊ (BCG) | | | | | | | | | |
| 3.ກ ໂປລິໂອ 0 (OPV0) | | | | | | | | | |
| 3.ຂ ໂປລິໂອ 1(OPV1) | | | | | | | | | |
| 3.ຄ ໂປລິໂອ 2 (OPV2) | | | | | | | | | |
| 3.ງ ໂປລິໂອ 3 (OPV3) | | | | | | | | | |
| 4.ກ ເດ-ເຕ-ເຊ1 (DPT1) | | | | | | | | | |
| 4.ຂ ເດ-ເຕ-ເຊ2 (DPT2) | | | | | | | | | |
| 4.ຄ ເດ-ເຕ-ເຊ3 (DPT3) | | | | | | | | | |
| 5.ກ ເອັສອີພີບີ 1 ຫລື ເດເປເຕເອັດເອີເບ (DPT)H1 | | | | | | | | | |
| 5.ຂ ເອັສອີພີບີ 2 ຫລື ເດເປເຕເອັດເອີເບ (DPT)H2 | | | | | | | | | |
| 5.ຄ ເອັສອີພີບີ 3 ຫລື ເດເປເຕເອັດເອີເບ (DPT)H3 | | | | | | | | | |
| 6. ໝາກແດງ (Measles) | | | | | | | | | |
| 7. ໝາກເຫຼືອງ ( YF ) | | | | | | | | | |
| 8.ກ ວິຕາມິນ A 1 ( Vit A 1) | | | | | | | | | |
| 8.ຂ ວິຕາມິນ A 2 ( Vit A 2) | | | | | | | | | |

ຄຳຖາມ 9 ແມ່ນຢາກຖາມເພີ້ມວ່ານອກຈາກເດັກໄດ້ສັກຢາທີ່ບັດທຶກຕາມບັດແລ້ວ, ມີເວລາອື່ນອີກບໍ່ທີ່ເດັກໄດ້ຮັບການສັກຢາເພີ້ມ ເຊັ່ນ ວັນສັກຢາແຫ່ງຊາດເປັນຕົ້ນ.

| | | |
|---|---|---|
| 9. ນອກຈາກການສັກຢາທີ່ໄດ້ບັນທຶກຢູ່ໃນບັດ, (ຊື່ເດັກ)ໄດ້ຮັບການສັກຢາເພີ້ມອີກຫລືບໍ່, ລວມທັງໄດ້ຮັບການສັກຢາໃນວັນສັກຢາແຫ່ງຊາດ? | ໄດ້ສັກ.............................................1<br>ບໍ່ໄດ້ສັກ..........................................2<br>**ບໍ່ຮູ້ຈັກ.............................................8** | 2⇒ຂໍ້ 19<br>8⇒ຂໍ້ 19 |

ຄຳຖາມ 10. ເດັກ(ຊື່)ເຄີຍໄດ້ຮັບການສັກຢາປ້ອງກັນພະຍາດແດ່ບໍ່ ? ລວມທັງການສັກຢາໃນໂຄງການສິ່ງເສີມ ແລະ ວັນສັກຢາແຫ່ງຊາດ

| | | |
|---|---|---|
| 10. ເດັກ(ຊື່)ເຄີຍໄດ້ຮັບການສັກຢາປ້ອງກັນພະຍາດແດ່ບໍ່ ? ລວມທັງການສັກຢາ ໃນໂຄງການສິ່ງເສີມ ແລະ ວັນສັກຢາແຫ່ງຊາດ | ໄດ້ສັກ.............................................1<br>ບໍ່ໄດ້ສັກ..........................................2<br>ບໍ່ຮູ້ຈັກ.............................................8 | 2⇒ຂໍ້ 19<br>8⇒ຂໍ້ 19 |

ຄຳຖາມ 11. ແມ່ນເລີ້ມຈາກ ການສັກ ເບເຊເຊເພີ້ມໃນວັນສັກຢາກັນພະຍາດ.

| | | |
|---|---|---|
| 11. (ຊື່ເດັກ) ເຄີຍໄດ້ຮັບການສັກຢາເບເຊເຊ (BCG)ຕ້ານພະຍາດວັນນະໂລກຫລືປອດແຫ້ງ ຫລື ບໍ່ ?<br>*(ກວດເບິ່ງແຂນເດັກຊຶ່ງແມ່ນສັກຢູ່ກົກແຂນເບື້ອງຂວາທີ່ພາໃຫ້ເປັນແປ້ວ)* | ມີ...................................................1<br>ບໍ່...................................................2<br>**ບໍ່ຮູ້ຈັກ...........................................8** | |

ຄຳຖາມທີ່ 12,13,14 : ແມ່ນຢາກຮູ້ວ່າເດັກເຄີຍໄດ້ຮັບການຢອດຢາເພື່ອຕ້ານໂປລີໂອ (ພະຍາດເປັ້ຍລ່ອຍ) ຫລືບໍ່. ຖ້າເຄີຍໄດ້ຮັບ, ແມ່ນໃຫ້ຖາມເວລາໃດ, ຫລັງເກີດ ຫລືວ່າ ເວລາຕໍ່ມາ ໝາຍຄວາມວ່າເວລາໃດນຶ່ງຫລັງຈາກນັ້ນ. ແລ້ວຈຶ່ງຖາມຫາຈຳນວນຄັ້ງທີ່ໄດ້ຮັບການຢອດຢາ. ຖ້າບໍ່ມີການຢອດກໍ່ຂ້າມໄປຂໍ້ 15 ເລີຍ.

| | | |
|---|---|---|
| 12. (ຊື່ເດັກ) ເຄີຍໄດ້ຮັບຢາຢອດໃສ່ປາກເພື່ອ ຕ້ານພະຍາດ(ໂປລີໂອ)ເປັ້ຍລ່ອຍຫລືບໍ່? | ເຄີຍ...................................................1<br>ບໍ່ເຄີຍ................................................2<br>**ບໍ່ຮູ້ຈັກ...............................................8** | 2⇒ຂໍ້ 15<br>8⇒ຂໍ້ 15 |
| 13. (ຊື່ເດັກ) ໄດ້ຮັບຢາຢອດໃສ່ປາກເທື່ອທຳອິດເວລາອາຍຸເທົ່າໃດ-ຫັລງ | ຫລັງເກີດທັນທີ......................................1<br>ຕໍ່ມາ..................................................2 | |

| | | |
|---|---|---|
| ເກີດທັນທີ ຫລື ຕໍ່ມາ? | | |
| 14. (ຊື່ເດັກ) ໄດ້ຮັບການຢອດຢາຈັກເທື່ອ? | ຈຳນວນເທື່ອ..................................__ __ | |

ຄຳຖາມ15,16 : ແມ່ນຢາກໄດ້ຄຳຕອບວ່າເດັກໄດ້ສັກຢາເດເຕເຊ (DPT) ເພື່ອກັນບາດທະຍັກ, ໄອໄກ່, ຄໍຕີບ ຫລືບໍ່. ຖ້າໄດ້ສັກຈິ່ງຂຽນຈຳນວນເທື່ອສັກລົງ. ຖ້າບໍ່ເຄີຍກໍ່ຂ້າມໄປຖາມຂໍ້ 17

| | | |
|---|---|---|
| 15. (ຊື່ເດັກ) ເຄີຍໄດ້ຮັບການສັກຢາຢູ່ກົ້ນ ຫລື ກົກຂາບໍ່ ເພື່ອກັນບາດທະຍັກ, ໄອໄກ່, ຄໍຕີບ? (ບາງຄັ້ງອາດແມ່ນສັກພ້ອມກັບການຢອດຢາ) | ເຄີຍ................................................1<br>ບໍ່ເຄີຍ............................................2<br>**ບໍ່ຮູ້ຈັກ.................... .......................8** | <br>2⇒ຂໍ້ 17<br>8⇒ຂໍ້ 17 |
| 16. (ຊື່ເດັກ) ໄດ້ຮັບຈັກເທື່ອ? | ຈຳນວນເທື່ອ...........................__ __ | |

ຄຳຖາມ 17: ແມ່ນຢາກຮູ້ວ່າເດັກໄດ້ຮັບການສັກຢາກັນໝາກແດງ ຫລືບໍ່ ?, ໂດຍກວດເບິ່ງຢູ່ກົກແຂນຂອງເດັກ. ການສັກຢານີ້ ແມ່ນ ສັກໃນເວລາເດັກໄດ້ອາຍຸ 9 ເດືອນ ຫລື ຫລາຍກ່ວານັ້ນ, ອາດຈະຖາມແມ່ ຫລືຜູ້ດູແລເດັກຕື່ມ ຖ້າຫາກກວດບໍ່ເຫັນແປ້ວຢູ່ກົກແຂນ.

| | | |
|---|---|---|
| 17. (ຊື່ເດັກ) ເຄີຍໄດ້ຮັບການສັກຢາຢູ່ ກົກແຂນເວລາ 9 ເດືອນ ຫລື ຫລາຍກ່ວານັ້ນບໍ່ ເພື່ອກັນພະຍາດໝາກແດງ? | ເຄີຍ......................................................1<br>ບໍ່ເຄີຍ..................................................2<br>**ບໍ່ຮູ້ຈັກ.................................................8** | |

ຄຳຖາມ 18. ແມ່ນຢາກຮູ້ວ່າເດັກໄດ້ຮັບການສັກຢາກັນໝາກເທື້ອງຫລືບໍ່ ?, ໂດຍກວດເບິ່ງຢູ່ກົກແຂນຂອງເດັກ. ການສັກຢານີ້ ແມ່ນ ສັກໃນເວລາເດັກໄດ້ອາຍຸ 9 ເດືອນ ຫລື ຫລາຍກ່ວານັ້ນ, ອາດຈະຖາມແມ່ ຫລືຜູ້ດູແລເດັກຕື່ມ ຖ້າຫາກກວດບໍ່ເຫັນແປ້ວຢູ່ກົກແຂນ.

| | | |
|---|---|---|
| 18. (ຊື່ເດັກ) ເຄີຍໄດ້ຮັບການສັກຢາຢູ່ ກົກແຂນເວລາ 9 ເດືອນ ຫລື ຫລາຍກ່ວານັ້ນບໍ່ ເພື່ອກັນພະຍາດໝາກເຫລືອງ? | ເຄີຍ................................................1<br>ບໍ່ເຄີຍ............................................2<br><br>ບໍ່ຮູ້ຈັກ...........................................8 | |

ຄຳຖາມ 19 ແມ່ນຢາກຖາມວ່າເດັກໄດ້ເຂົ້າຮ່ວມ ຫລືບໍ່ ໃນວັນສັກຢາກັນພະຍາດແຫ່ງຊາດ ຊຶ່ງໃນລະຫວ່າງເດືອນມີນາ ຂອງປີ 2000 ຫລື 2001 ນັ້ນ ໄດ້ມີການສັກຢາໝາກແດງ. ນັກເດີນສຳຫລວດຈະຕ້ອງໄດ້ຖາມຢ່າງລະອຽດໃນວັນສັກຢາແຫ່ງຊາດດັ່ງກ່າວ.

| | | |
|---|---|---|
| 19. ກາລຸນາບອກຂ້າພະເຈົ້າແດ່ວ່າ (ຊື່ເດັກ)ໄດ້ເຂົ້າຮ່ວມໃນວັນສັກຢາກັນພະຍາດແຫ່ງຊາດ, ໃດນຶ່ງຫລືບໍ່? | ແມ່ນ ບໍ່ແມ່ນ ບໍ່ຮູ້ຈັກ | |
| *ຄັ້ງທີ່ 1 ເດືອນມັງກອນ/2000* | ຄັ້ງທີ່ 1 ........................1 2 8 | |
| *ຄັ້ງທີ່ 2 ເດືອນກຸມພາລ2000* | ຄັ້ງທີ່ 2........................ 1 2 8 | |
| *ຄັ້ງທີ່ 2 ເດືອນກຸມພາລ2000* | ຄັ້ງທີ່ 3........................ 1 2 8 | |

## ໂມດູນ VIII: ການຊັ່ງນ້ຳໜັກ ແລະ ແທກລວງສູງ

ຫລັງຈາກຖາມແບບສອບຖາມໝົດທຸກຄົນສຳເລັດແລ້ວ, ຈິ່ງນັດເດັກອາຍຸຕ່ຳກ່ວາ 5 ປີ ເພື່ອຊັ່ງນ້ຳໜັກ ແລະ ແທກລວງສູງ. ຈິ່ງບັນທຶກນ້ຳໜັກ ແລະລວງສູງຢູ່ບ່ອນຫວ່າງລຸ່ມນີ້ ໃຫ້ພະຍາຍາມເບິ່ງຊື່ ແລະເລກແຖວຕາມລາຍຊື່ຄົວເຮືອນເພື່ອໃຫ້ກົງກັບແບບສອບຖາມເດັກແຕ່ລະຄົນ ແລະ ກວດ ຄືນຂຽນຊື່ ແລະ ເລກທີ່ກ່ອນຈະຊັ່ງນ້ຳໜັກ ແລະ ແທກລວງສູງເດັກ.

ຄຳຖາມ 1 : ແມ່ນຂຽນຊື່ເດັກນ້ອຍ ຜູ້ທີ່ຈະແທກນ້ຳໜັກ ແລະລວງສູງ ແລະສືບຕໍ່ຈົດເອົາຄຳຖາມ 2 ຈາກເລກລຳດັບຂອງຄົວເຮືອນໃສ່.

ຄຳຖາມ 3: ອາຍຸຂອງເດັກ: ໃຫ້ຂຽນອາຍຸເຕັມໃສ່

ຄຳຖາມ4 : ນ້ຳໜັກທີ່ຊັ່ງໄດ້? ໃຫ້ບັນທຶກນ້ຳໜັກຂອງເດັກທີ່ຊັ່ງໄດ້ເປັນກິໂລກລາມ ຫລັງຈາກນັ້ນແມ່ນສືບຕໍ່ເອົາເດັກນ້ອຍຄົນນັ້ນ ໄປວັກແທກລວງສູງ ໃນຄຳຖາມ 5.

ຄຳຖາມ 5 : ລວງສູງທີ່ວັດແທກໄດ້? ຊ່ອງນີ້ແມ່ນໃຫ້ບັນທຶກລວງສູງຂອງເດັກທີ່ແທກໄດ້ເປັນຊັງຕີແມັດ.

ການວັດແທກເດັກນ້ອຍຄົນນີ້ ແມ່ນໄດ້ໃຊ້ເປັນສອງວິທີ ໂດຍຂື້ນກັບອາຍຸຂອງເດັກ ດັ່ງນີ້ :

1. ກໍລະນີ ຖ້າເດັກຕ່ຳກ່ວາ 2 ປີ ແມ່ນໃຫ້ ແທກລວງຍາວໂດຍທາງນອນ, ຊຶ່ງໃຫ້ເດັກນອນຕາມແນວທາງຊື່, ອາດຈະຢູ່ໄມ້ແປ້ນທີ່ມີຮາບພຽງດີ.

2. ກໍລະນີທີ່ 2 ແມ່ນຖ້າເດັກອາຍຸ 2-4 ປີ ແມ່ນໃຫ້ແທກລວງສູງຕາມທາງຢືນ, ໂດຍເອົາ ເດັກໄມ້ຢືນໃສ່ເສົາ ຫລື ໄມ້ ທີ່ມີເສັ້ນຊີ້ ຊຶ່ງໄດ້ກະກຽມໄວ້ກ່ອນແລ້ວ.

ຄຳຖາມ 6 :ລະຫັດຜູ້ວັດແທກ : ແມ່ນໝາຍເຖິງລະຫັດຂອງນັກເດີນສຳຫຼວດເອງ.

ຄຳຖາມ 7 : ແມ່ນການຢັ້ງຢືນຂອງການວັດແທກເດັກແຕ່ລະຄົນ, ຜົນຂອງການວັດແທກ ເປັນແນວໃດ ? ຊຶ່ງມີຫລາຍຄຳຕອບໃຫ້ເລືອກ. ໃນຄຳຖາມນີ້ ນັກເດີນສຳຫລວດຕ້ອງເຮັດເອງຕາມ ພຶດຕິກຳຕົວຈິງຂອງເດັກ, ພໍ່ແມ່ເດັກ ແລະອື່ນໆ

ຖ້າໝາຍໝົດທຸກຂໍ້ແລ້ວກໍ່ຖາມຕໍ່ວ່າມີເດັກຕ່ຳກ່ວາ 5 ປີ ອີກບໍ່ໃນເຮືອນນີ້, ຖ້າມີກໍ່ໃຫ້ຖາມຕໍ່ ເດັກຜູ້ຕໍ່ໄປ.ຖ້າບໍ່ມີກໍ່ແມ່ນຈົບການສອບຖາມ. ຂອບໃຈນຳການຮ່ວມມື.